**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 428 /ຖວທ

ນະຄອນຫຼວງວຽງຈັນ, ວັນທີ 09 ພຶດສະພາ 2024

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງການບໍລິການແປພາສາ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ກົດໝາຍວ່າດ້ວຍການພິມຈຳໜ່າຍ (ສະບັບປັບປຸງ) ສະບັບເລກທີ 44/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ຄຳສັ່ງວ່າດ້ວຍການປັບປຸງວຽກງານການບໍລິການ ການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 03/ນຍ, ລົງວັນທີ 21/ 01/ 2020.

## ລັດຖະມົນຕີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການອະນຸຍາດດຳເນີນທຸລະກິດ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມກວດກາ ບໍລິສັດບໍລິການ, ໜ່ວຍງານແປພາສາ ແລະ ນັກບໍລິການແປພາສາອິດສະຫຼະ ເພື່ອສົ່ງເສີມ ແລະ ເປີດກວ້າງການບໍລິການແປພາສາ ໂດຍໃຫ້ຫຼາຍພາກສ່ວນເສດຖະກິດ ທັງພາກລັດ ແລະ ເອກະຊົນ ສາມາດເຂົ້າຮ່ວມ, ອຳນວຍຄວາມສະດວກໃຫ້ແກ່ສັງຄົມ ໃນການພົວພັນກັບການບໍລິການແປພາສາ, ປະກອບສ່ວນເຂົ້າໃນການພັດທະນາ ການບໍລິການແປພາສາໃຫ້ຖືກຕ້ອງ ແລະ ມີຄຸນນະພາບສູງຂຶ້ນ.

**ມາດຕາ 2 ການບໍລິການແປພາສາ**

ການບໍລິການແປພາສາ ແມ່ນການຮັບໃຊ້ຂອງບໍລິສັດບໍລິການ, ໜ່ວຍງານແປພາສາ ແລະ ນັກບໍລິການແປພາສາອິດສະຫຼະ ຊຶ່ງຕ້ອງແປພາສາໜຶ່ງໄປສູ່ພາສາອື່ນ ດ້ວຍການເວົ້າ, ການຂຽນ ຫຼື ການພິມ ໃຫ້ຖືກຕ້ອງ ແລະ ຜູ້ໃຊ້ບໍລິການ ຕ້ອງຈ່າຍຄ່າບໍລິການແປພາສານັ້ນ ຕາມລາຄາທີ່ໄດ້ຕົກລົງກັນ ຫຼື ຕາມລະບຽບການຂອງລັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ບໍລິການແປພາສາ ໝາຍເຖິງ ບໍລິສັດ ບໍລິການແປພາສາ, ໜ່ວຍງານ ແປພາສາ ຫຼື ນັກບໍລິການແປພາສາອິດສະຫຼະ ຊຶ່ງສາມາດແປເອກະສານ ຫຼື ການປາກເວົ້າ ຈາກພາສາໜຶ່ງໄປສູ່ພາສາອື່ນ;

2. ບໍລິສັດ ບໍລິການແປພາສາ ໝາຍເຖິງ ຫົວໜ່ວຍທຸລະກິດ ບໍລິການແປພາສາ ໃຫ້ທຸກຄົນໃນສັງຄົມດ້ວຍການຈັດຕັ້ງເປັນບໍລິສັດ ທີ່ມີຊື່ບໍລິສັດ, ວັດຖຸປະສົງຂອງການດຳເນີນທຸລະກິດ, ທີ່ຕັ້ງຂອງສຳນັກງານ, ມີພະນັກງານຢ່າງໜ້ອຍ ສາມ ຄົນຂຶ້ນໄປ ແລະ ໄດ້ຮັບການຈົດທະບຽນວິສາຫະກິດຢ່າງຖືກຕ້ອງ;

3. ໜ່ວຍງານແປພາສາ ໝາຍເຖິງ ກຸ່ມຄົນໜຶ່ງ (ນັບແຕ່ສອງຄົນຂຶ້ນໄປ) ຊຶ່ງເປັນຝ່າຍຮັບເຮັດວຽກແປພາສາ ໃຫ້ຜູ້ໃດໜຶ່ງ ຫຼື ພາກສ່ວນໃດໜຶ່ງ ໂດຍໄດ້ຮັບຄ່າແຮງງານຕອບແທນ ຕາມການຕົກລົງເຫັນດີນຳກັນ ຫຼື ຕາມລະບຽບການຂອງລັດ;

4. ນັກບໍລິການແປພາສາອິດສະຫຼະ ໝາຍເຖິງ ບຸກຄົນທີ່ມີຄວາມສາມາດບໍລິການແປພາສາ ໃຫ້ຄົນອື່ນເຂົ້າໃຈຢ່າງຖືກຕ້ອງ ຊຶ່ງເຮັດເປັນອາຊີບເສີມ ທີ່ສາມາດໄດ້ຮັບຄ່າຕອບແທນ ແລະ ຕ້ອງໄດ້ຂຶ້ນທະບຽນຢັ້ງຢືນຈາກອົງການຄຸ້ມຄອງການແປພາສາ ແຕ່ລະຂັ້ນ;

5. ການບໍລິການແປພາສາຕາມເອກະສານ ໝາຍເຖິງ ການແປພາສາທີ່ຕ້ອງໄດ້ຂຽນ ຫຼື ພິມຈຳໜ່າຍເພື່ອຈຸດປະສົງ ໂຄສະນາເຜີຍແຜ່ດ້ວຍຮູບການແຈກຢາຍລ້າ ແລະ ຂາຍ;

6. ການບໍລິການແປພາສາຕາມການປາກເວົ້າ ໝາຍເຖິງ ການບໍລິການແປພາສາທີ່ບໍ່ໄດ້ຂຽນ ຫຼື ພິມ ພຽງແຕ່ບັນທຶກເລັກໜ້ອຍ ເພື່ອຄວາມຊົງຈຳໃນເວລາແປເທົ່ານັ້ນ;

7. ອົງການຄຸ້ມຄອງການແປພາສາ ແຕ່ລະຂັ້ນ ໝາຍເຖິງ ກົມ, ກອງ, ພະແນກ ຫຼື ໜ່ວຍງານວິຊາການທີ່ຂຶ້ນກັບລັດ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງດ້ານວິຊາການຂອງກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຢູ່ຂັ້ນກະຊວງ ແລະ ຢູ່ຂັ້ນແຂວງ ປະກອບມີພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ ແລະ ເມືອງ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບການບໍລິການແປພາສາ**

ລັດ ສົ່ງເສີມ ແລະ ພັດທະນາວຽກງານບໍລິການແປພາສາ ໃຫ້ມີການຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ, ຊຸກຍູ້ວຽກງານບໍລິການແປພາສາຂອງບໍລິສັດບໍລິການແປພາສາ, ໜ່ວຍງານແປພາສາ ແລະ ນັກບໍລິການແປພາສາອິດສະຫຼະ ເພື່ອເຮັດໃຫ້ການແປພາສາ ກາຍເປັນຂະແໜງງານໜຶ່ງທີ່ປະກອບສ່ວນສົ່ງເສີມການອ່ານ, ການຮຽນຮູ້ ແລະ ຊ່ວຍສະໜອງຂໍ້ມູນຂ່າວສານເຂົ້າໃນການພັດທະນາ.

ລັດ ພັດທະນາການບໍລິການແປພາສາ ຕິດພັນກັບການຈັດພິມ, ການພິມ, ການຈຳໜ່າຍ ແລະ ການສົ່ງເສີມການອ່ານຢ່າງກວ້າງຂວາງດ້ວຍການປະຕິບັດນະໂຍບາຍ ສ້າງ ແລະ ປະກອບບຸກຄະລາກອນ, ການສະໜອງງົບປະມານ, ສິນເຊື່ອ, ພາຫະນະ, ວັດຖຸອຸປະກອນເຕັກນິກ, ເຕັກໂນໂລຢີທີ່ທັນສະໄໝ, ການຫຼຸດຜ່ອນ ຫຼື ຍົກເວັ້ນພາສີອາກອນ ຕາມລະບຽບກົດໝາຍ.

ລັດ ຊຸກຍູ້ໃຫ້ການຈັດຕັ້ງ, ບຸກຄົນທັງພາຍໃນ ແລະ ຕ່າງປະເທດປະກອບສ່ວນເຂົ້າໃນການພັດທະນາ, ການຝຶກອົບຮົມການບໍລິການແປພາສາ ລວມທັງການສະໜອງພາຫະນະ, ວັດຖຸອຸປະກອນ, ທຶນຮອນ ແລະ ອື່ນໆ ໃຫ້ແກ່ວຽກງານບໍລິການ ແລະ ຄຸ້ມຄອງການບໍລິການແປພາສາ.

**ມາດຕາ 5 ຫຼັກການ ການບໍລິການແປພາສາ**

ຫຼັກການ ການບໍລິການແປພາສາ ມີດັ່ງນີ້:

1. ການບໍລິການແປພາສາ ຕ້ອງເປັນປະໂຫຍດໃນການພັດທະນາ, ສະໜອງສາລະຄວາມຮູ້, ສາລະບັນເທີງ ທີ່ມີຄວາມຖືກຕ້ອງຕາມນະໂຍບາຍ, ລະບຽບກົດໝາຍ ແລະ ປະເພນີ, ວັດທະນະທຳອັນດີງາມຂອງຊາດ ທັງສອດຄ່ອງກັບກົນໄກເສດຖະກິດຕະຫຼາດ;

2. ການບໍລິການແປພາສາ ຕ້ອງຜ່ານຜູ້ບໍລິການແປພາສາ ທີ່ໄດ້ຮັບການອະນຸມັດຈາກອົງການຄຸ້ມຄອງການແປພາສາແຕ່ລະຂັ້ນຢ່າງຖືກຕ້ອງ ຖ້າຫາກບົດແປນັ້ນຕ້ອງການພິມ ເພື່ອໂຄສະນາເຜີຍແຜ່ ຫຼື ຈຳໜ່າຍ ຈະຕ້ອງປະຕິບັດຕາມລະບຽບການຂອງລັດ ຫຼື ຕາມກົດໝາຍທີ່ກ່ຽວຂ້ອງ;

3. ການບໍລິການແປ ບົດຄວາມດ້ານວິຊາການສະເພາະ ເປັນຕົ້ນ ບົດເສດຖະສາດ, ບົດວັນນະກຳ, ບົດການແພດ, ບົດກົດໝາຍ, ບົດການເມືອງ, ປະຫວັດສາດ, ວັດທະນະທຳ ແລະ ອື່ນໆ ຕ້ອງຜ່ານຜູ້ບໍລິການແປພາສາ ດ້ານວິຊາການສະເພາະຕາມທີ່ກ່າວມານັ້ນ ຕົວຢ່າງ: ການແປບົດວັນນະກຳ ຕ້ອງແມ່ນຜູ້ແປທີ່ມີການຢັ້ງຢືນການສຶກສາ ຫຼື ປະສົບປະການດ້ານວັນນະກຳ;

4. ເອກະສານແປພາສາທີ່ຈະນຳໃຊ້ໃນທາງດ້ານກົດໝາຍ ຕ້ອງໄດ້ຮັບການຢັ້ງຢືນຈາກອົງການຈັດຕັ້ງປະຕິບັດກົດໝາຍ ຫຼື ການຈົດທະບຽນສານ ຕາມກົດໝາຍ.

## ໝວດທີ 2
## ປະເພດຜູ້ບໍລິການແປພາສາ

**ມາດຕາ 6 ປະເພດຜູ້ບໍລິການແປພາສາ**

ການບໍລິການແປພາສາ ມີ ສາມ ປະເພດດັ່ງນີ້:

1. ບໍລິສັດ ບໍລິການແປພາສາ;
2. ໜ່ວຍງານ ແປພາສາ;
3. ນັກບໍລິການ ແປພາສາ ອິດສະຫຼະ.

**ມາດຕາ 7 ບໍລິສັດ ບໍລິການແປພາສາ**

ບໍລິສັດ ບໍລິການແປພາສາ ມີດັ່ງນີ້:

- ບໍລິສັດ ບໍລິການແປພາສາ ເອກະຊົນພາຍໃນ ລົງທຶນຮ້ອຍສ່ວນຮ້ອຍ;
- ບໍລິສັດ ບໍລິການແປພາສາເອກະຊົນພາຍໃນ ຫຸ້ນສ່ວນກັບຕ່າງປະເທດ;
- ສາຂາ ບໍລິສັດ ບໍລິການແປພາສາ ຕົວຢ່າງ: ບໍລິສັດ ບໍລິການແປພາສາ ທີ່ດີເອັດ ມີບໍລິສັດ ຕັ້ງຢູ່ນະຄອນຫຼວງວຽງຈັນເປັນສາຂາໃຫຍ່ ແຕ່ມີສາຂານ້ອຍຢູ່ເທດສະບານແຂວງວຽງຈັນ ແລະ ຢູ່ເມືອງຊະນະຄາມ.

**ມາດຕາ 8 ໜ່ວຍງານແປພາສາ**

ໜ່ວຍງານ ແປພາສາ ສັງກັດ ຢູ່ສຳນັກງານອົງການຂອງລັດ ເຊັ່ນ: ໜ່ວຍງານ ບໍລິການແປພາສາ ປະຈຳກະຊວງ, ອົງການ ຫຼື ບໍລິສັດ ລັດວິສາຫະກິດໃດໜຶ່ງ.

ໜ່ວຍງານ ແປພາສາ ສາມາດສ້າງຂຶ້ນໃນຮູບການ " ຄະນະກຳມະການ ຫຼື ອະນຸກຳມະການ ບໍລິການແປພາສາ " ກໍໄດ້ ແລະ ມີໜ້າທີ່ແປພາສາຮັບໃຊ້ສະເພາະຢູ່ພາຍໃນອົງກອນ ຫຼື ສາຍງານຂອງຕົນເທົ່ານັ້ນ.

**ມາດຕາ 9 ນັກບໍລິການແປພາສາອິດສະຫຼະ**

ນັກບໍລິການແປພາສາອິດສະຫຼະ ສັງກັດຢູ່ອົງການຈັດຕັ້ງຂອງພັກ - ລັດ, ຢູ່ໃນແຕ່ລະຂະແໜງການ ແລະ ແຕ່ລະແຂວງ, ນັກບໍລິການແປພາສາອິດສະຫຼະ ສາມາດຍຶດເປັນອາຊີບ ຫຼື ດຳເນີນໃນຮູບການເສດຖະກິດສ່ວນຕົວ ແບບຫາລາຍໄດ້ເສີມໃຫ້ແກ່ຄອບຄົວ.

## ໝວດທີ 3
## ມາດຕະຖານຂອງຜູ້ບໍລິການແປພາສາ

**ມາດຕາ 10 ມາດຕະຖານຂອງຫົວໜ້າ ບໍລິສັດ ບໍລິການແປພາສາ**

ຫົວໜ້າ ບໍລິສັດ ບໍລິການແປພາສາ ມີມາດຕະຖານຕົ້ນຕໍດັ່ງນີ້:

1. ເປັນພົນລະເມືອງລາວ ທີ່ມີອາຍຸ ແຕ່ 20 ປີ ຂຶ້ນໄປ;
2. ເປັນຜູ້ມີຄວາມຮູ້ ຄວາມສາມາດດ້ານການແປພາສາ, ຮຽນຈົບວິຊາການແປພາສາຊັ້ນສູງຂຶ້ນໄປ, ມີໃບຢັ້ງຢືນປະສົບການໃນການແປພາສາ;
3. ມີຄວາມຮູ້ແນວທາງ ແລະ ນະໂຍບາຍຂອງລັດ;
4. ມີຄວາມສາມາດໃນການບໍລິຫານທຸລະກິດການແປພາສາ;
5. ບໍ່ເຄີຍຖືກສານຕັດສິນລົງໂທດ ຕັດອິດສະຫຼະພາບ;
6. ມີສຸຂະພາບແຂງແຮງ.

**ມາດຕາ 11 ມາດຕະຖານ ຂອງຫົວໜ້າ ໜ່ວຍງານ ແປພາສາ**

ຫົວໜ້າ ໜ່ວຍງານ ແປພາສາ ມີມາດຕະຖານຕົ້ນຕໍ ດັ່ງນີ້:

1. ເປັນພົນລະເມືອງລາວ ທີ່ມີອາຍຸແຕ່ 20 ປີ ຂຶ້ນໄປ;
2. ເປັນພະນັກງານສັງກັດຢູ່ກະຊວງ, ລັດວິສາຫະກິດ, ອົງການທີ່ໜ່ວຍງານແປພາສາຂຶ້ນກັບ;
3. ເປັນຜູ້ມີຄວາມຮູ້ ຄວາມສາມາດ ດ້ານການແປພາສາ, ຮຽນຈົບວິຊາການແປພາສາຊັ້ນສູງຂຶ້ນໄປ, ມີໃບຢັ້ງຢືນປະສົບການໃນການແປພາສາ;
4. ມີຄວາມຮູ້ດ້ານທິດສະດີການເມືອງ;
5. ມີປະສົບການໃນວຽກງານຄຸ້ມຄອງບໍລິຫານ ການແປພາສາ;
6. ມີສຸຂະພາບແຂງແຮງ.

**ມາດຕາ 12 ມາດຕະຖານຂອງນັກບໍລິການ ແປພາສາອິດສະຫຼະ**

ນັກບໍລິການແປພາສາອິດສະຫຼະ ມີມາດຕະຖານຕົ້ນຕໍ ດັ່ງນີ້:

1. ເປັນພົນລະເມືອງລາວ ຫຼື ຄົນຕ່າງປະເທດທີ່ດຳລົງຊີວິດຢູ່ ສປປ ລາວ ທີ່ມີອາຍຸແຕ່ 20 ປີ ຂຶ້ນໄປ;
2. ເປັນຜູ້ມີຄວາມຮູ້ ຄວາມສາມາດດ້ານການແປພາສາ, ຮຽນຈົບວິຊາການແປພາສາ ຫຼື ພາສາສາດ ຊັ້ນສູງຂຶ້ນໄປ, ມີໃບຢັ້ງຢືນປະສົບການໃນການແປພາສາ;
3. ມີສຸຂະພາບແຂງແຮງ.

## ໝວດທີ 4
## ການຂໍອະນຸຍາດດຳເນີນທຸລະກິດ ບໍລິການແປພາສາ

**ມາດຕາ 13 ການຂໍອະນຸຍາດດຳເນີນທຸລະກິດຂອງບໍລິສັດ ບໍລິການແປພາສາ**

ການຂໍອະນຸຍາດດຳເນີນທຸລະກິດ ຂອງບໍລິສັດ ບໍລິການແປພາສາ ແມ່ນຕ້ອງໄດ້ຍື່ນເອກະສານຄົບຖ້ວນ ໃຫ້ແກ່ອົງການຄຸ້ມຄອງການແປພາສາ ແຕ່ລະຂັ້ນ ຊຶ່ງໄດ້ກຳນົດການແບ່ງຂັ້ນຄຸ້ມຄອງ ແລະ ອອກໃບອະນຸຍາດດຳເນີນທຸລະກິດບໍລິການແປພາສາ ຢູ່ມາດຕາ 22, ມາດຕາ 23 ແລະ ມາດຕາ 24 ຂອງຂໍ້ຕົກລົງສະບັບນີ້ ພິຈາລະນາ ບໍ່ເກີນ 30 ວັນ ເພື່ອອອກໃບອະນຸຍາດ ທີ່ມີອາຍຸການ ໜຶ່ງປີ ແລະ ສາມາດຕໍ່ໄດ້.

ຜູ້ມີຈຸດປະສົງສ້າງຕັ້ງ ບໍລິສັດ ບໍລິການແປພາສາ ຕ້ອງປະກອບເອກະສານຂໍອະນຸຍາດ ແລະ ຍື່ນຕໍ່ອົງການຄຸ້ມຄອງການແປພາສາ ແຕ່ລະຂັ້ນ ດັ່ງນີ້:

- ໃບຄຳຮ້ອງ ຕາມແບບຮ່າງຂອງອົງການຄຸ້ມຄອງການແປພາສາ 1 ສະບັບ;
- ບົດວິພາກເສດຖະກິດ 1 ສະບັບ;
- ຊີວະປະຫວັດ, ລະດັບວິຊາການ, ລະດັບພາສາຕ່າງປະເທດ, ໃບຢັ້ງຢືນປະສົບການ ດ້ານອື່ນທີ່ກ່ຽວພັນກັບການແປພາສາ ຢ່າງລະ 1 ສະບັບ;
- ບັນຊີລາຍຊື່ ພ້ອມດ້ວຍຮູບຂອງສະມາຊິກປະຈຳ ໃນບໍລິສັດ ບໍລິການແປພາສາ 1 ສະບັບ;
- ຮູບຂອງຜູ້ຮ້ອງຂໍສ້າງຕັ້ງ ຫຼື ຮູບຂອງຫົວໜ້າ ບໍລິສັດ ບໍລິການແປພາສາ ຂະໜາດ 3x4 ຊມ ຈຳນວນ 2 ແຜ່ນ;
- ໃບຢັ້ງຢືນທີ່ຢູ່ 1 ສະບັບ;
- ສຳເນົາບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ 1 ສະບັບ;
- ໃບແຈ້ງໂທດ 1 ສະບັບ;
- ແຜນວາດ ທີ່ຕັ້ງສຳນັກງານ 1 ສະບັບ;
- ສຳເນົາ ໃບທະບຽນວິສາຫະກິດ ທີ່ອອກໃຫ້ ໂດຍຂະແໜງການອຸດສາຫະກຳ ແລະ ການຄ້າ 1 ສະບັບ;
- ສຳເນົາໃບອະນຸຍາດການລົງທຶນ ຂອງຕ່າງປະເທດ ໃນກໍລະນີມີການລົງທຶນ ຮ່ວມມືກັບຕ່າງປະເທດ 1 ສະບັບ.

**ມາດຕາ 14 ການຂໍອະນຸຍາດ ດຳເນີນການບໍລິການຂອງໜ່ວຍງານ ແປພາສາ**

ການຂໍອະນຸຍາດ ດຳເນີນການບໍລິການຂອງໜ່ວຍງານ ແປພາສາ ແມ່ນຕ້ອງໄດ້ຍື່ນເອກະສານຄົບຖ້ວນ ໃຫ້ແກ່ອົງການຄຸ້ມຄອງການແປພາສາ ຂັ້ນກະຊວງ ພິຈາລະນາ ບໍ່ເກີນ 30 ວັນ ເພື່ອອອກໃບອະນຸຍາດ ທີ່ມີອາຍຸການໜຶ່ງປີ ແລະ ສາມາດຕໍ່ໄດ້.

ຜູ້ມີຈຸດປະສົງ ສ້າງຕັ້ງໜ່ວຍງານ ແປພາສາ ຕ້ອງປະກອບເອກະສານຂໍອະນຸຍາດ ແລະ ຍື່ນຕໍ່ອົງການຄຸ້ມຄອງການແປພາສາຂັ້ນກະຊວງ ດັ່ງນີ້:

- ໃບຄຳຮ້ອງຂອງສຳນັກງານຂະແໜງການທີ່ຕ້ອງການສ້າງຕັ້ງ 1 ສະບັບ;
- ຊື່ຂອງໜ່ວຍງານ ແປພາສາເປັນພາສາລາວ ແລະ ພາສາສາກົນ;
- ຊີວະປະຫວັດຂອງຫົວໜ້າ ໜ່ວຍງານ ແປພາສາ, ລະດັບວິຊາການລະດັບພາສາຕ່າງປະເທດ, ໃບຢັ້ງຢືນປະສົບການ ບໍລິການແປພາສາ ແລະ ປະສົບການດ້ານອື່ນ ທີ່ກ່ຽວພັນກັບການແປພາສາ ຢ່າງລະ 1 ສະບັບ;
- ຮູບຂອງຫົວໜ້າໜ່ວຍງານ ແປພາສາ ຂະໜາດ 3x4 ຊມ ຈຳນວນ 2 ແຜ່ນ;
- ບັນຊີລາຍຊື່ ພ້ອມດ້ວຍຮູບຂອງສະມາຊິກ ທີ່ຮ່ວມຢູ່ໃນໜ່ວຍງານ ແປພາສາ 1 ສະບັບ;
- ທີ່ຕັ້ງແຜນວາດ ຂອງໜ່ວຍງານ ແປພາສາ 1 ສະບັບ.

**ມາດຕາ 15 ການຂໍອະນຸຍາດດຳເນີນການບໍລິການຂອງນັກບໍລິການ ແປພາສາອິດສະຫຼະ**

ການຂໍອະນຸຍາດດຳເນີນການຂອງນັກບໍລິການ ແປພາສາອິດສະຫຼະ ແມ່ນຕ້ອງໄດ້ຍື່ນເອກະສານຄົບຖ້ວນ ໃຫ້ແກ່ອົງການຄຸ້ມຄອງການແປພາສາ ແຕ່ລະຂັ້ນ ຊຶ່ງໄດ້ກຳນົດການແບ່ງຂັ້ນຄຸ້ມຄອງ ແລະ ອອກໃບອະນຸຍາດດຳເນີນທຸລະກິດ ບໍລິການແປພາສາ ຢູ່ມາດຕາ 22, ມາດຕາ 23 ແລະ ມາດຕາ 24 ຂອງຂໍ້ຕົກລົງສະບັບນີ້ ພິຈາລະນາບໍ່ເກີນ 30 ວັນ ເພື່ອອອກໃບອະນຸຍາດ ທີ່ມີອາຍຸການ ໜຶ່ງປີ ແລະ ສາມາດຕໍ່ໄດ້.

ຜູ້ມີຈຸດປະສົງຕ້ອງການເປັນນັກບໍລິການ ແປພາສາ ອິດສະຫຼະ ຕ້ອງປະກອບເອກະສານຍື່ນຕໍ່ອົງການຄຸ້ມຄອງການແປພາສາ ແຕ່ລະຂັ້ນດັ່ງນີ້:

- ຊີວະປະຫວັດຕິດຮູບ, ລະດັບການສຶກສາດ້ານພາສາ, ໃບຢັ້ງຢືນຄວາມຮູ້ພາສາຕ່າງປະເທດ ຢ່າງໜ້ອຍ 1 ພາສາຂຶ້ນໄປ ແລະ ປະສົບການໃນການບໍລິການ ແປພາສາ 1 ຊຸດ;
- ຮູບຂະໜາດ 3 x 4 ຊມ ຈຳນວນ 3 ແຜ່ນ;
- ໃບຢັ້ງຢືນທີ່ຢູ່ 1 ສະບັບ;
- ສຳເນົາບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ 1 ສະບັບ;
- ໃບແຈ້ງໂທດ 1 ສະບັບ.

## ໝວດທີ 5
## ສິດ ແລະ ໜ້າທີ່ຂອງຜູ້ບໍລິການແປພາສາ

**ມາດຕາ 16 ສິດຂອງບໍລິສັດ ບໍລິການແປພາສາ**

ບໍລິສັດ ບໍລິການແປພາສາ ມີສິດດັ່ງນີ້:

1. ຕິດປ້າຍໃສ່ສຳນັກງານ ບໍລິສັດ ບໍລິການແປພາສາເປັນພາສາລາວ ແລະ ພາສາສາກົນ;
2. ມີຕາປະທັບເປັນຂອງຕົນເອງ;
3. ຄັດເລືອກປຶ້ມທີ່ຈະນຳມາແປ;
4. ພົວພັນ ຫຼື ຂໍ ແລະ ຊື້ລິຂະສິດຂອງຄົນອື່ນມາແປ;
5. ປົກປ້ອງ, ພິມໂຄສະນາ ເຜີຍແຜ່ ຫຼື ພິມຈຳໜ່າຍ ປຶ້ມແປ;
6. ກວດກາ, ຢັ້ງຢືນ, ລົງລາຍເຊັນ ແລະ ປະທັບຕາໃສ່ປຶ້ມແປຂອງຕົນ ແລະ ຂອງນັກບໍລິການແປພາສາອິດສະຫຼະ ທີ່ໄດ້ຮັບການຂຶ້ນທະບຽນອະນຸຍາດ ຈາກອົງການຄຸ້ມຄອງການແປພາສາ ແຕ່ລະຂັ້ນ;
7. ພົວພັນ, ປະສານງານກັບອົງການຄຸ້ມຄອງການແປພາສາ, ອົງການຈັດຕັ້ງປະຕິບັດວຽກງານທະບຽນສານ, ສຳນັກພິມ, ໂຮງພິມ ແລະ ສຳນັກງານອື່ນທີ່ກ່ຽວຂ້ອງ;
8. ຂະຫຍາຍສາຂາ ບໍລິສັດ ບໍລິການແປພາສາຢູ່ແຂວງ ແລະ ເມືອງ ໃນກໍລະນີທີ່ບໍລິສັດບໍລິການແປພາສາ ໄດ້ຂຶ້ນທະບຽນດຳເນີນທຸລະກິດ ຢູ່ຂັ້ນສູນກາງ;
9. ຮັບເອົາຜູ້ບໍລິການແປພາສາອິດສະຫຼະ ເປັນພະນັກງານປະຈຳ ຫຼື ພະນັກງານບໍ່ປະຈຳຂອງບໍລິສັດຕົນ;
10. ເກັບຄ່າກວດແກ້, ຮຽບຮຽງ, ຢັ້ງຢືນປຶ້ມແປ ໃຫ້ຜູ້ບໍລິການແປພາສາອິດສະຫຼະ ຕາມລະບຽບການ;
11. ຊຸກຍູ້, ສົ່ງເສີມ, ຍົກລະດັບ ແລະ ຍ້ອງຍໍຊົມເຊີຍພະນັກງານປະຈຳ ແລະ ຜູ້ບໍລິການແປພາສາ ອິດສະຫຼະ ທີ່ເປັນພະນັກງານບໍ່ປະຈຳຂອງບໍລິສັດຕົນ;
12. ສະເໜີຕໍ່ອົງການຄຸ້ມຄອງການແປພາທີ່ກ່ຽວຂ້ອງ ເພື່ອພິຈາລະນາ ກ່ຽວກັບການຢຸດເຊົາ ຫຼື ໂຈະການບໍລິການແປພາສາ ຂອງສາຂາບໍລິສັດຂອງຕົນ ໃນກໍລະນີທີ່ບໍລິສັດບໍລິການແປພາສາ ໄດ້ຂຶ້ນທະບຽນດຳເນີນທຸລະກິດ ຢູ່ຂັ້ນກະຊວງ;
13. ເຂົ້າຮ່ວມກອງປະຊຸມທີ່ອົງການຄຸ້ມຄອງການແປພາສາ ແຕ່ລະຂັ້ນເຊື້ອເຊີນ.

**ມາດຕາ 17 ສິດຂອງໜ່ວຍງານ ແປພາສາ**

ໜ່ວຍງານ ແປພາສາ ມີສິດດັ່ງນີ້:

1. ຄັດເລືອກປຶ້ມທີ່ຈະນໍາມາແປ ໃນຂະແໜງວິຊາການຂອງຕົນ;

2. ພົວພັນ ຫຼື ຂໍ ແລະ ຊື້ລິຂະສິດ ປຶ້ມວິຊາການທີ່ກ່ຽວຂ້ອງກັບຂະແໜງການຂອງຕົນຈາກພາກສ່ວນອື່ນ ຫຼື ຈາກຄົນອື່ນມາແປ;

3. ປົກປ້ອງ, ໂຄສະນາເຜີຍແຜ່ປຶ້ມແປ, ຖ້າປຶ້ມແປບໍ່ແມ່ນປຶ້ມນິຕິກໍາ ກ່ອນພິມເປັນເຫຼັ້ມປຶ້ມ ແລະ ກ່ອນຈໍາໜ່າຍຕ້ອງຜ່ານສໍານັກພິມ ເພື່ອກວດແກ້ ຢັ້ງຢືນເນື້ອໃນ ແລະ ນໍາໄປຈົດທະບຽນພິມຈໍາໜ່າຍກ່ອນ ຈຶ່ງພິມໂຄສະນາເຜີຍແຜ່ ຫຼື ພິມຈໍາໜ່າຍຕາມກົດໝາຍ;

4. ກວດກາ, ຢັ້ງຢືນປຶ້ມແປ ດ້ວຍການລົງລາຍເຊັນໃສ່ປຶ້ມແປ, ຖ້າຈະປະທັບຕາຕ້ອງແມ່ນຕາປະທັບຂອງສໍານັກງານ, ອົງການທີ່ໜ່ວຍງານແປພາສານັ້ນຂຶ້ນກັບ;

5. ພົວພັນ, ປະສານງານກັບອົງການຄຸ້ມຄອງການແປພາສາຂັ້ນກະຊວງ, ອົງການຈັດຕັ້ງປະຕິບັດວຽກງານທະບຽນສານ, ສໍານັກພິມ, ໂຮງພິມ ແລະ ສໍານັກງານອື່ນທີ່ມີສ່ວນກ່ຽວຂ້ອງ;

6. ສະເໜີຕໍ່ຫົວໜ້າອົງການ ຫຼື ສໍານັກງານທີ່ຕົນຂຶ້ນກັບ ເພື່ອຍົກລະດັບຄວາມຮູ້ຄວາມສາມາດດ້ານການແປພາສາ ແລະ ຍ້ອງຍໍຊົມເຊີຍເພື່ອນຮ່ວມງານທີ່ມີຜົນງານດີເດັ່ນ;

7. ສະເໜີຕໍ່ຂະແໜງການທີ່ຕົນຂຶ້ນກັບ ເພື່ອພິຈາລະນາກ່ຽວກັບການຢຸດເຊົາ ຫຼື ໂຈະການບໍລິການແປພາສາ ແລະ ລາຍງານຕໍ່ອົງການຄຸ້ມຄອງການແປພາສາຂັ້ນກະຊວງ ເພື່ອລຶບການຂຶ້ນທະບຽນຂໍອະນຸຍາດດໍາເນີນຂອງໜ່ວຍແປພາສາຂອງຕົນ.

**ມາດຕາ 18 ສິດຂອງນັກບໍລິການ ແປພາສາອິດສະຫຼະ**

ນັກບໍລິການແປພາສາອິດສະຫຼະ ມີສິດດັ່ງນີ້:

1. ຄັດເລືອກປຶ້ມທີ່ຈະນໍາມາແປ;

2. ພົວພັນ ຫຼື ຂໍລິຂະສິດຂອງຄົນອື່ນມາແປ;

3. ປຶ້ມແປ ຕ້ອງຜ່ານການຢັ້ງຢືນ (ມີຕາປະທັບ) ຈາກບໍລິສັດ ບໍລິການແປພາສາ ທີ່ໄດ້ຮັບການອະນຸມັດດໍາເນີນທຸລະກິດຢ່າງຖືກຕ້ອງ ແລະ ສາມາດຈັດພິມຈໍາໜ່າຍ ແລະ ເຜີຍແຜ່ປຶ້ມແປ ໂດຍປະຕິບັດຕາມກົດໝາຍວ່າດ້ວຍການພິມຈໍາໜ່າຍ;

4. ລົງລາຍເຊັນໃສ່ປຶ້ມແປ;

5. ພົວພັນ, ປະສານງານກັບບໍລິສັດ ບໍລິການແປພາສາ, ສໍານັກພິມ, ອົງການຄຸ້ມຄອງການແປພາສາ ແຕ່ລະຂັ້ນ, ອົງການຈັດຕັ້ງປະຕິບັດວຽກງານທະບຽນສານ, ໂຮງພິມ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

6. ສະເໜີສ້າງຕັ້ງເປັນບໍລິສັດ ບໍລິການແປພາສາ ຖ້າຫາກມີເງື່ອນໄຂຄົບຖ້ວນ;

7. ສະເໜີ ຕໍ່ອົງການຄຸ້ມຄອງການແປພາສາ ແຕ່ລະຂັ້ນ ເພື່ອພິຈາລະນາກ່ຽວກັບການຢຸດເຊົາ ຫຼື ໂຈະການເປັນນັກບໍລິການແປພາສາອິດສະຫຼະ.

**ມາດຕາ 19 ໜ້າທີ່ຂອງບໍລິສັດ ບໍລິການແປພາສາ**

ບໍລິສັດ ບໍລິການແປພາສາ ມີໜ້າທີ່ດັ່ງນີ້:

1. ຮັບບໍລິການແປປຶ້ມວັນນະກໍາ, ປຶ້ມເອກະສານຄວາມຮູ້ວິຊາການຕ່າງໆ ແລະ ເອກະສານດ້ານນິຕິກໍາ;

2. ປັບປຸງ ແລະ ພັດທະນາການບໍລິການແປພາສາ ໃຫ້ມີຄຸນນະພາບ;

3. ດໍາເນີນການບໍລິການແປພາສາ ພ້ອມທັງຈ່າຍຄ່າທໍານຽມ ແລະ ພາສີອາກອນທຸລະກິດຕາມລະບຽບການ ແລະ ກົດໝາຍ;

4. ເຂົ້າຮ່ວມກອງປະຊຸມປະຈຳປີ ທີ່ອົງການຄຸ້ມຄອງການແປພາສາຈັດຂຶ້ນ;

5. ສ້າງລະບຽບຄຸ້ມຄອງບໍລິສັດຂອງຕົນ;

6. ສະຫຼຸບ ລາຍງານສະພາບການບໍລິການແປພາສາ, ພະນັກງານ ແລະຈຳນວນນັກບໍລິການ ແປພາສາອິດສະຫຼະທີ່ເຂົ້າມາຜ່ານຕາປະທັບຂອງບໍລິສັດຕົນ ໃຫ້ອົງການຄຸ້ມຄອງການແປພາສາທີ່ບໍລິສັດຕົນ ໄດ້ຂຶ້ນທະບຽນຂໍອະນຸຍາດດຳເນີນທຸລະກິດ ໃນແຕ່ລະປີ ຫຼື ແຕ່ລະໄລຍະ.

**ມາດຕາ 20 ໜ້າທີ່ຂອງໜ່ວຍງານ ແປພາສາ**

ໜ່ວຍງານ ແປພາສາ ມີໜ້າທີ່ດັ່ງນີ້:

1. ຮັບບໍລິການແປບົດ ຫຼື ເອກະສານຕ່າງໆທີ່ກ່ຽວຂ້ອງກັບວຽກງານຂະແໜງການຂອງຕົນ ລວມທັງເອກະສານດ້ານນິຕິກຳ;

2. ສະເໜີສຳນັກງານ, ຂະແໜງການທີ່ຕົນຂຶ້ນກັບ ເພື່ອປັບປຸງພັດທະນາໜ່ວຍງານແປພາສາຂອງຕົນ ໃຫ້ມີຄຸນນະພາບ;

3. ດຳເນີນການບໍລິການແປພາສາ ພ້ອມທັງຈ່າຍຄ່າທຳນຽມ ຕາມລະບຽບການ ຫຼື ກົດໝາຍ;

4. ເຂົ້າຮ່ວມກອງປະຊຸມປະຈຳປີທີ່ອົງການຄຸ້ມຄອງການແປພາສາຂັ້ນກະຊວງ ຈັດຂຶ້ນ;

5. ສ້າງລະບຽບຄຸ້ມຄອງໜ່ວຍງານ ແປພາສາຂອງຕົນ;

6. ສະຫຼຸບ ລາຍງານສະພາບການບໍລິການແປພາສາຂອງໜ່ວຍງານຕົນ ໃຫ້ອົງການຄຸ້ມຄອງການແປພາສາ ຂັ້ນກະຊວງ ໃນແຕ່ລະປີ ຫຼື ແຕ່ລະໄລຍະ.

**ມາດຕາ 21 ໜ້າທີ່ຂອງນັກບໍລິການ ແປພາສາອິດສະຫຼະ**

ນັກບໍລິການ ແປພາສາອິດສະຫຼະ ມີໜ້າທີ່ດັ່ງນີ້:

1. ຮັບບໍລິການແປບົດວັນນະກຳ, ບົດເອກະສານດ້ານຄວາມຮູ້ທົ່ວໄປ ແລະ ເອກະສານດ້ານນິຕິກຳ ໂດຍຜ່ານຕາປະທັບຈາກບໍລິສັດບໍລິການແປພາສາ ທີ່ໄດ້ຮັບການອະນຸຍາດດຳເນີນທຸລະກິດຢ່າງຖືກຕ້ອງ;

2. ເຂົ້າຮ່ວມກອງປະຊຸມປະຈຳເດືອນ ຫຼື ໄຕມາດ ນຳບໍລິສັດບໍລິການແປພາສາ ແລະ ກອງປະຊຸມປະຈຳປີທີ່ອົງການຄຸ້ມຄອງການແປພາສາ ທີ່ຕົນໄດ້ຂຶ້ນທະບຽນຈັດຂຶ້ນຕາມການເຊື້ອເຊີນ;

3. ດຳເນີນການບໍລິການແປພາສາ ພ້ອມທັງຈ່າຍຄ່າທຳນຽມຂຶ້ນທະບຽນ ເປັນນັກບໍລິການ ແປພາສາອິດສະຫຼະ ໃຫ້ອົງການຄຸ້ມຄອງການແປພາສາ ແຕ່ລະຂັ້ນໃນແຕ່ລະປີ ຕາມລະບຽບການ;

4. ນຳເອົາບົດແປຂອງຕົນໄປກວດກາເນື້ອໃນ, ຢັ້ງຢືນຄວາມຖືກຕ້ອງ ແລະ ປະທັບຕາຈາກບໍລິສັດ ບໍລິການແປພາສາ ທີ່ໄດ້ຮັບການອະນຸຍາດການດຳເນີນທຸລະກິດຢ່າງຖືກຕ້ອງ ຈ່າຍຄ່າທຳນຽມຕາມລະບຽບການ;

5. ປັບປຸງ ແລະ ພັດທະນາວຽກງານບໍລິການແປພາສາຂອງຕົນ ໃຫ້ຖືກຕ້ອງຕາມຫຼັກໄວຍາກອນ;

6. ສະຫຼຸບ ລາຍງານສະພາບການບໍລິການແປພາສາ ໃຫ້ບໍລິສັດ ບໍລິການແປພາສາ ແລະ ໃຫ້ອົງການຄຸ້ມຄອງການແປພາສາ ແຕ່ລະຂັ້ນທີ່ຕົນໄດ້ຂຶ້ນທະບຽນຢ່າງເປັນປົກກະຕິ.

## ໝວດທີ 6
## ການແບ່ງຂັ້ນຄຸ້ມຄອງ ແລະ ອອກໃບອະນຸຍາດດຳເນີນທຸລະກິດ ບໍລິການແປພາສາ

**ມາດຕາ 22 ພາກສ່ວນຄຸ້ມຄອງ ແລະ ອອກໃບອະນຸຍາດດຳເນີນທຸລະກິດ ບໍລິການແປພາສາ**

ກົມວັນນະຄະດີ ແລະ ພິມຈຳໜ່າຍ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາງໜ້າອົງການຄຸ້ມຄອງການແປພາສາຂັ້ນກະຊວງ ເປັນເຈົ້າການປະສານສົມທົບກັບ ຕາງໜ້າອົງການຄຸ້ມຄອງການແປພາສາຂັ້ນແຂວງ ປະກອບມີພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ແລະ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ນະຄອນຫຼວງ ເພື່ອຄຸ້ມຄອງການເຄື່ອນໄຫວ ແລະ ອອກໃບອະນຸຍາດດຳເນີນທຸລະກິດບໍລິການແປພາສາ ໃຫ້ໄດ້ຮັບປະສິດທິຜົນດີຖືກຕ້ອງຕາມລະບຽບການ ແລະ ກົດໝາຍ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງການແປພາສາ ຂັ້ນກະຊວງ**

ອົງການຄຸ້ມຄອງການແປພາສາ ຂັ້ນກະຊວງ ມີສິດ ແລະ ໜ້າທີ່ໃນຄຸ້ມຄອງ ແລະ ອອກໃບອະນຸຍາດດຳເນີນທຸລະກິດບໍລິການແປພາສາ ດັ່ງນີ້:

1. ພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດບໍລິການແປພາສາ ໂດຍມີທຶນຈົດທະບຽນວິສາຫະກິດ ແຕ່ໜຶ່ງຕື້ກີບ ຂຶ້ນໄປ (ອີງຕາມຕົວເລກທີ່ແຈ້ງຢູ່ໃນສຳເນົາໃບທະບຽນວິສາຫະກິດ) ຊຶ່ງມີທີ່ຕັ້ງສານັກງານຢູ່ນະຄອນຫຼວງວຽງຈັນ ຫຼື ແຂວງ ແລະ ສາມາດສ້າງຕັ້ງສາຂາບໍລິສັດ ຢູ່ນະຄອນຫຼວງ ຫຼື ແຂວງອື່ນ ພ້ອມທັງສາມາດເຄື່ອນໄຫວການບໍລິການແປພາສາ ໃນຂອບເຂດທົ່ວປະເທດ;

2. ພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດບໍລິການແປພາສາ ໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນພາຍໃນໂດຍຮູບແບບການລົງທຶນຮ້ອຍສ່ວນຮ້ອຍ ແລະ ການລົງທຶນພາຍໃນຫຸ້ນສ່ວນກັບຕ່າງປະເທດ;

3. ພິຈາລະນາອອກໃບອະນຸຍາດໜ່ວຍງານແປພາສາ ໃຫ້ແກ່ສຳນັກງານອົງການຂອງລັດ ແລະ ບໍລິສັດ ລັດວິສາຫະກິດ;

4. ພິຈາລະນາອອກໃບຢັ້ງຢືນການເປັນນັກແປພາສາອິດສະຫຼະ ຂັ້ນກະຊວງ ທີ່ສາມາດເຄື່ອນໄຫວການບໍລິການແປພາສາໃນຂອບເຂດທົ່ວປະເທດ ຊຶ່ງຜູ້ຍື່ນຂໍໃບຢັ້ງຢືນນັ້ນຈະຕ້ອງມີປະສົບປະການໃນການແປພາສາ ນັບແຕ່ຫ້າປີ ຂຶ້ນໄປ ຫຼື ຕາມກຳນົດໄວ້ໃນລະບຽບການຕ່າງຫາກ;

5. ເຜີຍແຜ່ ແນະນຳຂໍ້ຕົກລົງສະບັບນີ້ ພ້ອມດ້ວຍນິຕິກຳອື່ນໆ ກ່ຽວຂ້ອງກັບການຄຸ້ມຄອງ ແລະ ອອກໃບອະນຸຍາດດຳເນີນທຸລະກິດການບໍລິການແປພາສາ ໃຫ້ແຕ່ລະພາກສ່ວນເຂົ້າໃຈຢ່າງຖືກຕ້ອງ;

6. ປະສານສົມທົບກັບຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງແຜນການ ແລະ ການລົງທຶນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຂັ້ນກະຊວງ ເພື່ອເກັບກຳຂໍ້ມູນ ແລະ ອຳນວຍຄວາມສະດວກການເຄື່ອນໄຫວຂອງວິສາຫະກິດ ບໍລິການແປພາສາ;

7. ຕິດຕາມກວດກາການເຄື່ອນໄຫວຂອງບໍລິສັດແປພາສາ, ໜ່ວຍງານແປພາສາ ແລະ ນັກບໍລິການແປພາສາອິດສະຫຼະ ທີ່ໄດ້ຂຶ້ນທະບຽນຢູ່ຂັ້ນກະຊວງ ແລະ ປະສານສົມທົບກັບອົງການຄຸ້ມຄອງການແປພາສາ ຂັ້ນແຂວງ, ນະຄອນຫຼວງ ໃນການລົງກວດກາການເຄື່ອນໄຫວຂອງບໍລິສັດແປພາສາ ແລະ ນັກບໍລິການແປພາສາອິດສະຫຼະ ຢູ່ຂັ້ນແຂວງ, ນະຄອນຫຼວງ ຕາມຂໍ້ຕົກລົງສະບັບນີ້;

8. ສະຫຼຸບ ລາຍງານການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ອອກໃບອະນຸຍາດດໍາເນີນທຸລະກິດການບໍລິການແປພາສາ ໃຫ້ຄະນະນໍາກະຊວງ ປະຈໍາໄຕມາດ, ຫົກເດືອນ ແລະ ປະຈໍາປີ;

9. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ ຂອງຂັ້ນເທິງ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງ ການແປພາສາຂັ້ນແຂວງ, ນະຄອນຫຼວງ**

ອົງການຄຸ້ມຄອງການແປພາສາ ຂັ້ນແຂວງ ໄດ້ກໍານົດອອກເປັນສອງຂັ້ນ ຄືດັ່ງນີ້:

1. ອົງການຄຸ້ມຄອງການແປພາສາ ຂັ້ນແຂວງ ຫຼື ນະຄອນຫຼວງ ມີສິດ ແລະ ໜ້າທີ່ໃນຄຸ້ມຄອງ ແລະ ອອກໃບອະນຸຍາດດໍາເນີນທຸລະກິດ ບໍລິການແປພາສາ ດັ່ງນີ້:

1) ພິຈາລະນາອອກໃບອະນຸຍາດດໍາເນີນທຸລະກິດບໍລິການແປພາສາ ໂດຍມີທຶນຈົດທະບຽນວິສາຫະກິດ ແຕ່ ຫ້າຮ້ອຍລ້ານກີບ ຫາ ໜຶ່ງຕື້ກີບ (ອີງຕາມຕົວເລກທີ່ແຈ້ງຢູ່ໃນສໍາເນົາໃບທະບຽນວິສາຫະກິດ) ຊຶ່ງມີທີ່ຕັ້ງສໍານັກງານ ຢູ່ພາຍໃນແຂວງ ຫຼື ນະຄອນຫຼວງ ພ້ອມທັງສາມາດເຄື່ອນໄຫວການບໍລິການແປພາສາ ໃນຂອບເຂດພາຍໃນແຂວງ ຫຼື ນະຄອນຫຼວງ ທີ່ຕົນຮັບຜິດຊອບ;

2) ພິຈາລະນາອອກໃບອະນຸຍາດດາເນີນທຸລະກິດບໍລິການແປພາສາໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນພາຍໃນ ໂດຍຮູບແບບການລົງທຶນຮ້ອຍສ່ວນຮ້ອຍ;

3) ພິຈາລະນາອອກໃບອະນຸຍາດໍາເນີນທຸລະກິດ ຂອງສາຂາບໍລິສັດບໍລິການແປພາສາ ທີ່ໄດ້ຈົດທະບຽນຢູ່ຂັ້ນກະຊວງ ພ້ອມທັງຕິດຕາມການເຄື່ອນໄຫວຂອງສາຂາບໍລິສັດດັ່ງກ່າວ;

4) ພິຈາລະນາອອກໃບຢັ້ງຢືນການເປັນນັກແປພາສາອິດສະຫຼະ ຂັ້ນແຂວງ ທີ່ສາມາດເຄື່ອນໄຫວການບໍລິການແປພາສາຂອບເຂດຢູ່ພາຍໃນແຂວງ ຫຼື ນະຄອນຫຼວງ ທີ່ຕົນຮັບຜິດຊອບ ຊຶ່ງຜູ້ຍື່ນຂໍໃບຢັ້ງຢືນ ຈະຕ້ອງມີປະສົບປະການໃນການແປພາສາ ຢ່າງໜ້ອຍ ສອງປີ;

5) ປະສານສົມທົບກັບຂະແໜງການອຸດສາຫະກໍາ ແລະ ການຄ້າ, ຂະແໜງແຜນການ ແລະ ການລົງທຶນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ, ນະຄອນຫຼວງ ເພື່ອເກັບກໍາຂໍ້ມູນ ແລະ ອໍານວຍຄວາມສະດວກການເຄື່ອນໄຫວຂອງວິສາຫະກິດບໍລິການແປພາສາ;

6) ກວດກາບໍລິສັດແປພາສາ ແລະ ນັກບໍລິການ ແປພາສາອິດສະຫຼະ ທີ່ຂຶ້ນທະບຽນຢູ່ຂັ້ນແຂວງທີ່ຕົນຮັບຜິດຊອບ ແລະ ປະສານສົມທົບກັບອົງການຄຸ້ມຄອງການແປພາສາຂັ້ນກະຊວງ, ຂັ້ນແຂວງ ແລະ ຂັ້ນເມືອງ ໃນການລົງກວດກາການເຄື່ອນໄຫວຂອງບໍລິສັດແປພາສາ ແລະ ນັກບໍລິການ ແປພາສາອິດສະຫຼະ ຢູ່ຂັ້ນແຂວງ ພ້ອມທັງລາຍງານການສະພາບການຄຸ້ມຄອງການແປພາສາ ໃຫ້ອົງການຄຸ້ມຄອງການແປພາສາຂັ້ນກະຊວງ ຕາມຂໍ້ຕົກລົງສະບັບນີ້;

7) ສະຫຼຸບ ລາຍງານການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ອອກໃບອະນຸຍາດດໍາເນີນທຸລະກິດການບໍລິການແປພາສາ ໃຫ້ຄະນະນໍາແຂວງ ແລະ ກະຊວງ ປະຈໍາໄຕມາດ, ຫົກເດືອນ ແລະ ປະຈໍາປີ;

8) ປະຕິບັດ ສິດ ແລະ ໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

2. ອົງການຄຸ້ມຄອງການແປພາສາຂັ້ນເມືອງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ໃນຄຸ້ມຄອງ ແລະ ອອກໃບອະນຸຍາດດໍາເນີນທຸລະກິດບໍລິການແປພາສາດັ່ງນີ້:

1) ພິຈາລະນາອອກໃບອະນຸຍາດດໍາເນີນທຸລະກິດບໍລິການແປພາສາ ໂດຍມີທຶນຈົດທະບຽນວິສາຫະກິດ ຕໍ່າກວ່າ ຫ້າຮ້ອຍລ້ານກີບ ລົງມາ (ອີງຕາມຕົວເລກທີ່ແຈ້ງຢູ່ໃນສໍາເນົາໃບທະບຽນວິສາຫະກິດ) ຊຶ່ງມີທີ່ຕັ້ງສໍານັກງານ ຢູ່ພາຍໃນເມືອງ ຫຼື ນະຄອນຫຼວງ ພ້ອມທັງສາມາດເຄື່ອນໄຫວການບໍລິການແປພາສາ ໃນຂອບເຂດພາຍໃນເມືອງ ຫຼື ນະຄອນຫຼວງ ທີ່ຕົນຮັບຜິດຊອບ;

2) ພິຈາລະນາອອກໃບອະນຸຍາດດາເນີນທຸລະກິດບໍລິການແປພາສາ ໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນພາຍໃນ ໂດຍຮູບແບບການລົງທຶນຮ້ອຍສ່ວນຮ້ອຍ;

3) ພິຈາລະນາອອກໃບຢັ້ງຢືນການເປັນນັກແປພາສາອິດສະຫຼະຂັ້ນເມືອງ ທີ່ສາມາດເຄື່ອນໄຫວການບໍລິການແປພາສາຂອບເຂດຢູ່ພາຍໃນເມືອງ ຫຼື ນະຄອນຫຼວງ ທີ່ຕົນຮັບຜິດຊອບ ຊຶ່ງຜູ້ຍື່ນຂໍໃບຢັ້ງຢືນ ຂັ້ນເມືອງ ຈະມີປະສົບປະການ ຫຼື ຍັງບໍ່ທັນມີປະສົບປະການໃນການແປພາສາກໍໄດ້, ແຕ່ຕ້ອງມີໃບຢັ້ງຢືນການສຶກສາທີ່ກ່ຽວຂ້ອງກັບພາສາທີ່ແປ;

4) ປະສານສົມທົບກັບຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງແຜນການ ແລະ ການລົງທຶນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງ ເພື່ອອຳນວຍຄວາມສະດວກ ແລະ ເກັບກຳຂໍ້ມູນການເຄື່ອນໄຫວຂອງວິສາຫະກິດບໍລິການແປພາສາ;

5) ກວດກາບໍລິສັດແປພາສາ ແລະ ນັກບໍລິການແປພາສາອິດສະຫຼະ ທີ່ຂຶ້ນທະບຽນຢູ່ຂັ້ນເມືອງ, ນະຄອນຫຼວງທີ່ຕົນຮັບຜິດຊອບ ແລະ ປະສານສົມທົບກັບອົງການຄຸ້ມຄອງການແປພາສາຂັ້ນແຂວງ ແລະ ຂັ້ນກະຊວງ ໃນການລົງກວດກາການເຄື່ອນໄຫວຂອງບໍລິສັດແປພາສາ ແລະ ນັກບໍລິການແປພາສາອິດສະຫຼະຢູ່ຂັ້ນແຂວງ ພ້ອມທັງລາຍງານການສະພາບການຄຸ້ມຄອງການແປພາສາ ໃຫ້ອົງການຄຸ້ມຄອງການແປພາສາຂັ້ນແຂວງ ຕາມຂໍ້ຕົກລົງສະບັບນີ້;

6) ສະຫຼຸບ ລາຍງານການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ອອກໃບອະນຸຍາດດຳເນີນທຸລະກິດການບໍລິການແປພາສາໃຫ້ຄະນະນຳເມືອງ ແລະ ແຂວງ ປະຈຳໄຕມາດ, ຫົກເດືອນ ແລະ ປະຈຳປີ;

7) ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 7
## ຂໍ້ຫ້າມ

### ມາດຕາ 25 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ ແລະ ການຈັດຕັ້ງ ມີການກະທຳດັ່ງນີ້:

1. ແປບົດຂຽນ, ເອກະສານ, ປຶ້ມ, ສິ່ງພິມ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ;

2. ຈັດພິມ ແລະ ຈັດຈຳໜ່າຍບົດແປ, ປຶ້ມແປ, ສິ່ງພິມທີ່ແປຈາກພາສາຕ່າງປະເທດເປັນພາສາລາວ ໂດຍບໍ່ໄດ້ຮັບອະນຸຍາດ;

3. ແປປຶ້ມ, ເອກະສານ ຫຼື ສິ່ງພິມພາສາລາວເປັນພາສາຕ່າງປະເທດ ແລະ ພາສາຕ່າງປະເທດເປັນພາສາລາວທີ່ມີເນື້ອໃນຕໍ່ຕ້ານ ສປປ ລາວ, ມ້າງເພຄວາມສາມັກຄີຂອງປວງຊົນ, ກໍ່ຄວາມອາຄາດບາດໝາງລະຫວ່າງເຜົ່າ ແລະ ລະຫວ່າງຊາດ, ບິດເບືອນປະຫວັດສາດ - ວັດທະນະທຳ, ປະຕິເສດຜົນສຳເລັດຂອງການປະຕິວັດ, ແຕະຕ້ອງກຽດສັກສີຂອງວິລະບູລຸດ, ວິລະຊົນຂອງຊາດ, ຂອງການຈັດຕັ້ງ ແລະ ກຽດສັກສີຂອງພົນລະເມືອງທົ່ວໄປ.

### ມາດຕາ 26 ຂໍ້ຫ້າມ ສຳລັບຜູ້ບໍລິການແປພາສາ

ຫ້າມຜູ້ບໍລິການແປພາສາ ມີການກະທຳດັ່ງນີ້:

1. ໃສ່ຊື່ ບໍລິສັດບໍລິການ, ໜ່ວຍງານແປພາສາ ບໍ່ເໝາະສົມ, ບໍ່ຈະແຈ້ງ ແລະ ຄືກັບຊື່ຂອງບໍລິສັດອື່ນ;

2. ນຳເອົາໃບອະນຸຍາດດຳເນີນທຸລະກິດບໍລິການແປພາສາ ແລະ ບັດຜູ້ບໍລິການແປພາສາອິດສະຫຼະ ໃຫ້ບຸກຄົນອື່ນນຳໃຊ້ ຫຼື ປ່ຽນແປງ, ປອມແປງໃບອະນຸຍາດດັ່ງກ່າວຢ່າງເດັດຂາດ. ຖ້າຫາກບັດ ແລະ ໃບອະນຸຍາດດຳເນີນທຸລະກິດບໍລິການແປພາສາ ຕົກເຮ່ຍເສຍຫາຍ, ເປື້ອນ, ຈີກຂາດ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງການແປພາສາຢ່າງທັນການ;

3. ດຳເນີນການບໍລິການແປພາສາ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງການແປພາສາ, ບໍ່ໄດ້ຮັບການຈົດທະບຽນວິສາຫະກິດ, ບໍ່ມີໃບຢັ້ງຢືນການເປັນນັກບໍລິການແປພາສາອິດສະຫຼະ ແລະ ບໍ່ປະຕິບັດພັນທະດ້ານພາສີອາກອນຕາມລະບຽບການ ແລະ ກົດໝາຍ.

**ມາດຕາ 27 ຂໍ້ຫ້າມ ສໍາລັບພະນັກງານຂອງອົງການຄຸ້ມຄອງການແປພາສາ**

ຫ້າມພະນັກງານຂອງອົງການຄຸ້ມຄອງການແປພາສາ ມີການກະທໍາດັ່ງນີ້:

1. ສວຍໃຊ້ອໍານາດ, ໜ້າທີ່, ຕໍາແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ, ຮັບສິນບົນຈາກຜູ້ບໍລິການແປພາສາ ຫຼື ຜູ້ອື່ນໆ;
2. ແກ່ຍາວເວລາໃນການພິຈາລະນາເອກະສານ ຂໍອະນຸຍາດດໍາເນີນທຸລະກິດບໍລິການແປພາສາ;
3. ປອມແປງເອກະສານ ຫຼື ແຈ້ງຂໍ້ມູນບໍ່ຖືກຕ້ອງ ໂດຍເຈດຕະນາ;
4. ພຶດຕິກໍາອື່ນທີ່ເປັນຂໍ້ຫ້າມທີ່ກໍານົດໄວ້ໃນລະບຽບການ ແລະ ກົດໝາຍ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28 ນະໂຍບາຍຕໍ່ຜູ້ມີຜົນງານ**

ບໍລິສັດ ບໍລິການແປພາສາ, ໜ່ວຍງານແປພາສາ, ນັກບໍລິການແປພາສາອິດສະຫຼະ, ຜູ້ຄຸ້ມຄອງ ແລະ ກອດ ກາວຽກງານແປພາສາ ທີ່ມີຜົນງານດີເດັ່ນໃນການປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ມີບົດແປ, ການແປ, ການບໍ ລິຫານງານທີ່ດີເດັ່ນ ຫຼື ໄດ້ປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງວຽກງານການແປພາສາ ຈະໄດ້ຮັບການຍ້ອງຍໍ ເຊັ່ນ: ຫຼຽນໄຊ, ຫຼຽນກາ, ໃບຍ້ອງຍໍ, ນາມມະຍົດ ແລະ ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 29 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກໍານົດໄວ້ໃນມາດຕາ 25, ມາດ ຕາ 26 ແລະ ມາດຕາ 27 ຈະຖືກປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ, ປັບໃໝ, ໃຊ້ແທນທາງແພ່ງ ຫຼື ຖືກດໍາເນີນຄະດີທາງອາຍາ.

**ມາດຕາ 30 ມາດຕະການສຶກສາອົບຮົມ**

ບໍລິສັດ ບໍລິການແປພາສາ, ໜ່ວຍງານແປພາສາ, ນັກບໍລິການແປພາສາອິດສະຫຼະ ແລະ ອົງການຈັດຕັ້ງ ກ່ຽວກັບການບໍລິການແປພາສາ ທີ່ມີການລະເມີດຂໍ້ຕົກລົງສະບັບນີ້ ເປັນເທື່ອທໍາອິດ ເຊັ່ນ: ແປຜິດ, ແປບໍ່ຖືກຕາມ ເນື້ອໃນເດີມ, ພິມຜິດ, ໃສ່ຮູບພາບຜິດພາດ, ແປ ແລະ ພິມ ໂຄສະນາເຜີຍແຜ່ ຫຼື ພິມຈໍາໜ່າຍ ໂດຍບໍ່ໄດ້ຮັບ ອະນຸຍາດແປໂດຍບໍ່ໄດ້ຢັ້ງຢືນຄວາມຖືກຕ້ອງຂອງບົດແປ ເທື່ອທໍາອິດຈະຖືກແນະນໍາ ສຶກສາອົບຮົມ ກ່າວເຕືອນ ແລະ ເກັບຄືນບົດແປ ໂດຍເຮັດບົດບັນທຶກຢ່າງຄັກແນ່.

**ມາດຕາ 31 ມາດຕະການປັບໃໝ**

ບຸກຄົນ, ບໍລິສັດ ບໍລິການແປພາສາ, ໜ່ວຍງານແປພາສາ, ນັກບໍລິການແປພາສາອິດສະຫຼະ ແລະ ອົງການ ຈັດຕັ້ງກ່ຽວກັບການບໍລິການແປພາສາ ທີ່ມີການລະເມີດຂໍ້ຕົກລົງສະບັບນີ້ ເປັນເທື່ອທີສອງ ເຊັ່ນ: ແປຜິດ, ແປບໍ່ ຖືກຕາມເນື້ອໃນເດີມ, ພິມຜິດ, ໃສ່ຮູບພາບຜິດພາດ, ແປ ແລະ ພິມໂຄສະນາ ເຜີຍແຜ່ ຫຼື ພິມຈໍາໜ່າຍ ໂດຍບໍ່ໄດ້ ຮັບອະນຸຍາດ, ແປໂດຍບໍ່ໄດ້ຢັ້ງຢືນຄວາມຖືກຕ້ອງຂອງບົດແປ ເທື່ອທີສອງຈະຖືກປັບໃໝ 2 ເທົ່າ ຂອງມູນຄ່າບົດ ແປ ຫຼື ການແປ.

**ມາດຕາ 32 ມາດຕະການທາງແພ່ງ**

ບຸກຄົນ, ບໍລິສັດ ບໍລິການແປພາສາ, ໜ່ວຍງານແປພາສາ, ນັກບໍລິການແປພາສາອິດສະຫຼະ ແລະ ອົງການ ຈັດຕັ້ງກ່ຽວກັບການບໍລິການແປພາສາ ທີ່ມີການລະເມີດຂໍ້ຕົກລົງສະບັບນີ້ ເຊັ່ນ: ແປຜິດ, ແປບໍ່ຖືກຕາມເນື້ອໃນ

ເດີມ, ແປໃດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຂອງເນື້ອໃນ ຈາກອົງການທີ່ກ່ຽວຂ້ອງ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຖືກໃຊ້ແທນຄ່າເສຍຫາຍທາງແພ່ງ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 33 ມາດຕະການທາງອາຍາ**

ບຸກຄົນທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການລະເມີດຂໍ້ຫ້າມ ຊຶ່ງເປັນການກະທໍາຜິດທາງອາຍາ ຈະຖືກລົງໂທດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍອາຍາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 34 ການປ່ຽນສະຖານທີ່ ຫຼື ການຢຸດເຊົາ ການດໍາເນີນການບໍລິການແປພາສາ**

ໃນກໍລະນີທີ່ມີຄວາມຈໍາເປັນຕ້ອງປ່ຽນສະຖານທີ່ ຫຼື ຢຸດເຊົາການດໍາເນີນການບໍລິການແປພາສາ ຕ້ອງເຮັດໜັງສືສະເໜີຕໍ່ອົງການຄຸ້ມຄອງການແປພາສາກ່ອນຈະປ່ຽນສະຖານທີ່ ຫຼື ຢຸດເຊົາການບໍລິການຢ່າງໜ້ອຍ 30 ວັນ.

**ມາດຕາ 35 ການຖອນ ຫຼື ການລົບລ້າງໃບອະນຸຍາດດໍາເນີນທຸລະກິດ ບໍລິການແປພາສາ**

ອົງການຄຸ້ມຄອງການແປພາສາ ມີສິດຖອນ ຫຼື ລົບລ້າງບັດ ຫຼື ໃບອະນຸຍາດດໍາເນີນການບໍລິການແປພາສາ ຖ້າຫາກເຫັນວ່າ ບໍລິສັດ ບໍລິການແປພາສາ, ໜ່ວຍງານແປພາສາ ແລະ ນັກບໍລິການແປພາສາອິດສະຫຼະ ມີການກະ ທໍາຜິດ ແລະ ຖືກປະຕິບັດມາດຕະການ ຕາມມາດຕາ 32 ແລະ 33 ຂອງຂໍ້ຕົກລົງ ສະບັບນີ້.

ອົງການຄຸ້ມຄອງການແປພາສາ ມີສິດ ຖອນ ຫຼື ລົບລ້າງ ໃບຢັ້ງຢືນເປັນນັກບໍລິການແປພາສາອິດສະຫຼະ ຫາກບໍ່ມີການເຄື່ອນໄຫວ, ໝົດອາຍຸ ແລະ ເຄື່ອນໄຫວລະເມີດຂໍ້ຕົກລົງສະບັບນີ້.

**ມາດຕາ 36 ການຈັດຕັ້ງປະຕິບັດ**

ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ກົມວັນນະຄະດີ ແລະ ພິມຈໍາໜ່າຍ, ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງ, ນະຄອນຫຼວງມີໜ້າທີ່ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 37 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການບໍລິການແປພາສາ ສະບັບເລກທີ 65/ຖວ, ລົງວັນທີ 27/ 1/ 2010. ຜູ້ບໍລິການການແປພາສາ ທີ່ໄດ້ອອກອະນຸຍາດດໍາເນີນທຸລະກິດບໍລິການແປພາສາ ກ່ອນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດຈົນໝົດອາຍຸການຂອງໃບອະນຸຍາດດໍາເນີນທຸລະກິດບໍລິການແປພາສາ ສະບັບນັ້ນ.

ລັດຖະມົນຕີ

ສວນສະຫວັນ ວິຍະເກດ

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງການບໍລິການແປພາສາ

## ສາລະບັນ


**ໝວດທີ 1** ........ **1**
**ບົດບັນຍັດທົ່ວໄປ** ........ **1**
ມາດຕາ 1 ຈຸດປະສົງ ........ 1
ມາດຕາ 2 ການບໍລິການແປພາສາ ........ 1
ມາດຕາ 3 ການອະທິບາຍຄໍາສັບ ........ 2
ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບ ການບໍລິການແປພາສາ ........ 2
ມາດຕາ 5 ຫຼັກການ ການບໍລິການແປພາສາ ........ 3
**ໝວດທີ 2** ........ **3**
**ປະເພດຜູ້ບໍລິການແປພາສາ** ........ **3**
ມາດຕາ 6 ປະເພດຜູ້ບໍລິການແປພາສາ ........ 3
ມາດຕາ 7 ບໍລິສັດບໍລິການແປພາສາ ........ 3
ມາດຕາ 8 ໜ່ວຍງານແປພາສາ ........ 3
ມາດຕາ 9 ນັກບໍລິການແປພາສາອິດສະຫຼະ ........ 4
**ໝວດທີ 3** ........ **4**
**ມາດຕະຖານ ຂອງຜູ້ບໍລິການແປພາສາ** ........ **4**
ມາດຕາ 10 ມາດຕະຖານ ຂອງຫົວໜ້າບໍລິສັດບໍລິການແປພາສາ ........ 4
ມາດຕາ 11 ມາດຕະຖານ ຂອງຫົວໜ້າໜ່ວຍງານແປພາສາ ........ 4
ມາດຕາ 12 ມາດຕະຖານ ຂອງນັກບໍລິການແປພາສາອິດສະຫຼະ ........ 4
**ໝວດທີ 4** ........ **5**
**ການຂໍອະນຸຍາດ ດໍາເນີນທຸລະກິດ ບໍລິການແປພາສາ** ........ **5**
ມາດຕາ 13 ການຂໍອະນຸຍາດ ດໍາເນີນທຸລະກິດ ຂອງບໍລິສັດ ບໍລິການແປພາສາ ........ 5
ມາດຕາ 14 ການຂໍອະນຸຍາດ ດໍາເນີນການບໍລິການຂອງໜ່ວຍງານ ແປພາສາ ........ 5
ມາດຕາ 15 ການຂໍອະນຸຍາດ ດໍາເນີນການບໍລິການ ຂອງນັກບໍລິການແປພາສາອິດສະຫຼະ ........ 6
**ໝວດທີ 5** ........ **6**
**ສິດ ແລະ ໜ້າທີ່ຂອງຜູ້ບໍລິການແປພາສາ** ........ **6**
ມາດຕາ 16 ສິດຂອງບໍລິສັດບໍລິການແປພາສາ ........ 6
ມາດຕາ 17 ສິດຂອງໜ່ວຍງານແປພາສາ ........ 7
ມາດຕາ 18 ສິດຂອງນັກບໍລິການແປພາສາອິດສະຫຼະ ........ 7
ມາດຕາ 19 ໜ້າທີ່ຂອງບໍລິສັດບໍລິການແປພາສາ ........ 7
ມາດຕາ 20 ໜ້າທີ່ຂອງໜ່ວຍງານແປພາສາ ........ 8
ມາດຕາ 21 ໜ້າທີ່ຂອງນັກບໍລິການແປພາສາອິດສະຫຼະ ........ 8

ໝວດທີ 6 ........ 9
ການແບ່ງຂັ້ນຄຸ້ມຄອງ ແລະ ອອກໃບອະນຸຍາດດຳເນີນທຸລະກິດບໍລິການແປພາສາ ........ 9
ມາດຕາ 22 ພາກສ່ວນຄຸ້ມຄອງ ແລະ ອອກໃບອະນຸຍາດດຳເນີນທຸລະກິດບໍລິການແປພາສາ ........ 9
ມາດຕາ 23 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງການແປພາສາ ຂັ້ນກະຊວງ ........ 9
ມາດຕາ 24 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງການແປພາສາ ຂັ້ນແຂວງ ........ 10
ໝວດທີ 7 ........ 11
ຂໍ້ຫ້າມ ........ 11
ມາດຕາ 25 ຂໍ້ຫ້າມທົ່ວໄປ ........ 11
ມາດຕາ 26 ຂໍ້ຫ້າມສຳລັບຜູ້ບໍລິການແປພາສາ ........ 11
ມາດຕາ 27 ຂໍ້ຫ້າມສຳລັບພະນັກງານ ຂອງອົງການຄຸ້ມຄອງການແປພາສາ ........ 12
ໝວດທີ 8 ........ 12
ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ........ 12
ມາດຕາ 28 ນະໂຍບາຍຕໍ່ຜູ້ມີຜົນງານ ........ 12
ມາດຕາ 29 ມາດຕະການຕໍ່ຜູ້ລະເມີດ ........ 12
ມາດຕາ 30 ມາດຕະການສຶກສາອົບຮົມ ........ 12
ມາດຕາ 31 ມາດຕະການປັບໃໝ ........ 12
ມາດຕາ 32 ມາດຕະການທາງແພ່ງ ........ 12
ມາດຕາ 33 ມາດຕະການທາງອາຍາ ........ 13
ໝວດທີ 9 ........ 13
ບົດບັນຍັດສຸດທ້າຍ ........ 13
ມາດຕາ 34 ການປ່ຽນສະຖານທີ່ ຫຼື ການຢຸດເຊົາ ການດຳເນີນການບໍລິການແປພາສາ ........ 13
ມາດຕາ 35 ການຖອນ ຫຼື ການລົບລ້າງໃບອະນຸຍາດດຳເນີນທຸລະກິດບໍລິການແປພາສາ ........ 13
ມາດຕາ 36 ການຈັດຕັ້ງປະຕິບັດ ........ 13
ມາດຕາ 37 ຜົນສັກສິດ ........ 13